ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະໂຄສະນາອົບຮົມສູນກາງພັກ

ເລກທີ 32/ຄອສພ
ນະຄອນຫຼວງວຽງຈັນ, ວັນທີ 19/12/2022

# ຄໍາແນະນໍາ
# ກ່ຽວກັບການຈັດຕັ້ງຜັນຂະຫຍາຍເນື້ອໃນ
# ກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V

**ເຖິງ:** ບັນດາສະຫາຍເລຂາຄະນະພັກ ກະຊວງ-ອົງການ ອ້ອມຂ້າງສູນກາງ, ເລຂາ ຄະນະພັກນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນທົ່ວປະເທດ.

**ເລື່ອງ:** ການຈັດຕັ້ງຜັນຂະຫຍາຍເນື້ອໃນກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V.

- ອີງຕາມ ມະຕິຕົກລົງຂອງກົມການເມືອງສູນກາງພັກ ສະບັບເລກທີ 20/ກມສພ, ລົງວັນທີ 13 ຕຸລາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະໂຄສະນາອົບຮົມສູນກາງພັກ.
- ອີງໃສ່ຜົນສໍາເລັດຂອງກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V ທີ່ໄດ້ດໍາເນີນໃນວັນທີ 17-18 ພະຈິກ 2022.
- ອີງຕາມ ທິດຊີ້ນໍາຂອງກອງປະຊຸມກົມການເມືອງສູນກາງພັກຮ່ວມກັບຄະນະເລຂາທິການສູນກາງພັກ ຄັ້ງວັນທີ 3-4 ພະຈິກ 2022.

ເພື່ອເຮັດໃຫ້ເນື້ອໃນກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V ໄດ້ຮັບການຈັດຕັ້ງຜັນຂະຫຍາຍ ເຂົ້າໃນຊີວິດສັງຄົມໃຫ້ປະກົດຜົນເປັນຈິງ, ຄະນະໂຄສະນາອົບຮົມສູນກາງພັກ ອອກຄໍາແນະນໍານີ້:

**I. ຈຸດປະສົງ-ລະດັບຄາດໝາຍ.**

1. ເພື່ອໃຫ້ຄະນະພັກກະຊວງ-ອົງການອ້ອມຂ້າງສູນກາງ, ຄະນະພັກນະຄອນຫຼວງວຽງຈັນ ແລະ ຄະນະພັກແຂວງ ໃນທົ່ວປະເທດ ຕະຫຼອດຮອດສະມາຊິກພັກ, ພະນັກງານ, ທະຫານ, ຕໍາຫຼວດ, ປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆ ໃນສັງຄົມໄດ້ຮັບຮູ້, ເຂົ້າໃຈ, ເຊື່ອມຊຶມ ແລະ ກໍາແໜ້ນ ເນື້ອໃນຂອງກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V ຢ່າງເລິກເຊິ່ງ. ບົນພື້ນຖານດັ່ງກ່າວ ເພື່ອຍົກສູງນໍ້າໃຈຮັກຊາດ, ຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ເສີມສ້າງຄວາມສາມັກຄີເປັນປຶກແຜ່ນ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ.

2. ເພື່ອສ້າງກໍາລັງແຮງ ແຫ່ງຄວາມເປັນເອກະພາບດ້ານການເມືອງ, ແນວຄິດ ແລະ ກໍາລັງແຮງໃນການຈັດຕັ້ງປະຕິບັດພາລະກິດປະຕິວັດຂອງພັກ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ຮັບປະກັນໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງ, ມີຄວາມໝັ້ນຄົງ ແລະ ຄວາມສະຫງົບສຸກ

ໃນສັງຄົມ, ເສດຖະກິດສືບຕໍ່ໄດ້ຮັບການພັດທະນາ ແລະ ຊີວິການເປັນຢູ່ຂອງປະຊາຊົນບັນດາເຜົ່າ ນັບມື້ນັບດີຂຶ້ນ, ບົດບາດອິດທິພົນຂອງຊາດ ໄດ້ພົ້ນເດັ່ນຂຶ້ນໃນເວທີສາກົນ.

3. ເພື່ອໃຫ້ຄະນະພັກແຕ່ລະຂັ້ນ, ຜູ້ນໍາພາແຕ່ລະບ່ອນຕ້ອງຍົກສູງຄວາມສາມາດ ແລະ ຄວາມຮັບຜິດຊອບຂອງຕົນ ໃນການເຄື່ອນໄຫວວຽກງານການເມືອງ-ແນວຄິດຢູ່ໃນທ່າບຸກ ໂດຍຫັນເອົາເນື້ອໃນຂອງກອງປະຊຸມ ແລະ ຄວາມເຫັນຊີ້ນໍາ ຂອງສະຫາຍເລຂາທິການໃຫຍ່, ປະທານປະເທດ ໃຫ້ເປັນນິຕິກໍາລະອຽດ ແລະ ເປັນແຜນການເຄື່ອນໄຫວຕົວຈິງ ໃນການໂຄສະນາສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ, ພະນັກງານ, ທະຫານ, ຕໍາຫຼວດ, ປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆໃນສັງຄົມຢ່າງກວ້າງຂວາງ, ທົ່ວເຖິງ ແລະ ເລິກເຊິ່ງ.

## II. ເນື້ອໃນຕົ້ນຕໍສໍາລັບເຊື່ອມຊຶມ ແລະ ຜັນຂະຫຍາຍ.

1. ບົດສະຫຼຸບຕີລາຄາສະພາບການຈັດຕັ້ງປະຕິບັດວຽກງານການເມືອງ-ແນວຄິດ ໄລຍະແຕ່ປີ 2003-2022 ແລະ ທິດທາງຮອດປີ 2025.

2. ຄໍາເຫັນຊີ້ນໍາຂອງສະຫາຍເລຂາທິການໃຫຍ່ ຕໍ່ກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V.

3. ມະຕິກອງປະຊຸມວຽກງານການເມືອງ-ແນວຄິດທົ່ວປະເທດ ຄັ້ງທີ V ແລະ ມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 206/ກມສພ, ລົງວັນທີ 07 ທັນວາ 2020 ວ່າດ້ວຍການຍົກສູງຄຸນນະພາບວຽກງານການເມືອງ-ແນວຄິດ ໃນໄລຍະໃໝ່ ແລະ ເອກະສານຕັ້ງໜ້າຜັນຂະຫຍາຍມະຕິດັ່ງກ່າວນີ້ ເຂົ້າໃນຊີວິດສັງຄົມຕົວຈິງ.

## III. ວິທີການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ຢູ່ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ.

ເພື່ອເຮັດໃຫ້ການຈັດຕັ້ງຜັນຂະຫຍາຍເນື້ອໃນກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V ໄດ້ຮັບຜົນດີ. ໃຫ້ຄະນະພັກບັນດາກະຊວງ-ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ເອົາໃຈໃສ່ບາງບັນຫາ ດັ່ງນີ້:

1. ໃຫ້ຄະນະພັກບັນດາກະຊວງ-ອົງການ, ໂດຍສະເພາະແມ່ນສະຫາຍເລຂາຄະນະພັກຢູ່ແຕ່ລະບ່ອນ ເປັນຜູ້ຮັບຜິດຊອບໂດຍກົງ, ເປັນຜູ້ຮຽກໂຮມປະຊຸມ ພ້ອມທັງເປັນເຈົ້າການຊີ້ນໍາໃນການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍເນື້ອໃນກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V ໃຫ້ແກ່ສະມາຊິກພັກ, ພະນັກງານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ.

2. ສໍາລັບຂັ້ນແຂວງ, ນະຄອນຫຼວງວຽງຈັນ ແມ່ນສະຫາຍເລຂາຄະນະພັກແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງຂັ້ນແຂວງ, ນະຄອນຫຼວງວຽງຈັນ, ເລຂາພັກເມືອງ ແລະ ນະຄອນ. ນອກຈາກນັ້ນ, ມອບໃຫ້ສະຫາຍເລຂາພັກເມືອງ ນໍາໄປຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ຢູ່ຂັ້ນເມືອງ, ນະຄອນ ໂດຍເຕົ້າໂຮມພະນັກງານຫຼັກແຫຼ່ງຂັ້ນເມືອງ, ຄະນະພັກຮາກຖານ ແລະ ເລຂາໜ່ວຍພັກເຂົ້າຮ່ວມ. ສໍາລັບຢູ່ຂັ້ນຮາກຖານ, ເຂດຊົນນະບົດ, ພູດອຍ, ບ່ອນຫ່າງໄກສອກຫຼີກ ແມ່ນມອບໃຫ້ບັນດາສະຫາຍເລຂາຄະນະພັກຮາກຖານ, ເລຂາຄະນະພັກໜ່ວຍ ແຕ່ລະບ່ອນເປັນເຈົ້າການໃນການຫັນເອົາເນື້ອໃນດັ່ງກ່າວ ໃຫ້ແທດເໝາະກັບສະພາບຕົວຈິງແຕ່ລະບ່ອນ ແລ້ວນໍາໄປເຜີຍແຜ່ຜັນຂະຫຍາຍໃຫ້ປະຊາຊົນບັນດາເຜົ່າ ແລະ ຊັ້ນຄົນຕ່າງໆໄດ້ຮັບຮູ້ເຂົ້າໃຈ, ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດໃຫ້ເປັນຮູບປະທໍາຕົວຈິງ.

3. ການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍເນື້ອໃນກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V ນັ້ນ, ນອກຈາກເນື້ອໃນຕົ້ນຕໍທີ່ໄດ້ກໍານົດໄວ້ແລ້ວນັ້ນ, ບັນດາກະຊວງ-ອົງການ, ແຂວງ,

ນະຄອນຫຼວງວຽງຈັນ ຍັງຕ້ອງໄດ້ເອົາບົດສະຫຼຸບຕີລາຄາການປະຕິບັດວຽກງານການເມືອງ-ແນວຄິດ 5 ປີ ຜ່ານມາ ໃນຂັ້ນທີ່ຕົນຮັບຜິດຊອບນັ້ນ ມາຈັດຕັ້ງຜັນຂະຫຍາຍໄປພ້ອມໆກັນຕື່ມອີກ.

4. ມອບໃຫ້ກົມອົບຮົມ-ກົມໂຄສະນາຂອງ ບັນດາກະຊວງ, ອົງການ, ຄະນະໂຄສະນາອົບຮົມແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການຊ່ວຍຄະນະພັກຂັ້ນຂອງຕົນ ໃນການຄົ້ນຄວ້າ, ສ້າງແຜນການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍເນື້ອໃນດັ່ງກ່າວ ໃຫ້ທັນກຳນົດເວລາ ແລະ ມີປະສິດທິຜົນກວ່າເກົ່າ.

5. ພາຍຫຼັງສຳເລັດການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍແລ້ວ, ຄະນະພັກບັນດາກະຊວງ-ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການສະຫຼຸບລາຍງານຜົນການຈັດຕັ້ງຜັນຂະຫຍາຍເນື້ອໃນກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V ໃຫ້ຄະນະໂຄສະນາອົບຮົມສູນກາງພັກ ເພື່ອລາຍງານຕໍ່ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກຮັບຊາບ ແລະ ໃຫ້ທິດຊີ້ນຳໃນຂັ້ນຕໍ່ໄປ.

**IV. ການກຳນົດເວລາ ແລະ ງົບປະມານ.**

ການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍເນື້ອໃນກອງປະຊຸມວຽກງານການເມືອງ-ແນວຄິດ ທົ່ວປະເທດ ຄັ້ງທີ V ແມ່ນເລີ່ມແຕ່ເດືອນ 12/2022-ເດືອນ 3/2023 ໃຫ້ສຳເລັດ ພ້ອມທັງລາຍງານຜົນການຈັດຕັ້ງປະຕິບັດໃຫ້ຄະນະໂຄສະນາອົບຮົມສູນກາງພັກ. ສຳລັບງົບປະມານໃຊ້ຈ່າຍໃນການເຄື່ອນໄຫວເຜີຍແຜ່ຜັນຂະຫຍາຍດັ່ງກ່າວ ແມ່ນນຳໃຊ້ງົບປະມານຂອງ ກະຊວງ-ອົງການ ແລະ ຂອງແຂວງ, ນະຄອນຫຼວງວຽງຈັນ ຂອງຕົນ.

ດັ່ງນັ້ນ, ຈຶ່ງຖືເປັນກຽດອອກຄຳແນະນຳມາຍັງບັນດາສະຫາຍເລຂາຄະນະພັກ ບັນດາກະຊວງ-ອົງການ, ແຂວງ ແລະ ນະຄອນຫຼວງວຽງຈັນ ຮັບຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຄຳແນະນຳດັ່ງກ່າວດ້ວຍ.

**ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

ຄຳພັນ ເຜີຍຍະວົງ